ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ພາກໃຕ້ ແຂວງຈຳປາສັກ

ເລກທີ.1103../ທຫລ ພຕ
ແຂວງຈຳປາສັກ,ວັນທີ 15 ກັນຍາ 2022

# ປະກາດຮັບສະໝັກພະນັກງານຕາມສັນຍາ

ທະນາຄານແຫ່ງ ສປປ ລາວ ພາກໃຕ້ ແຂວງຈຳປາສັກ ຕ້ອງການຮັບສະໝັກພະນັກງານຕາມສັນຍາ 01 ຕຳແໜ່ງ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

**I ພະນັກງານອະນາໄມຈຳນວນ 01 ຕຳແໜ່ງ**

**ເງື່ອນໄຂ ແລະ ໜ້າທີ່ຮັບຜິດຊອບຂອງພະນັກງານອະນາໄມ**

- ເພດຍິງ ອາຍຸ 30-40 ປີ; ສັນຊາດລາວ; ວຸດທິການສຶກສາ ຈົບມໍ 3 ຂຶ້ນໄປ;
- ມີປະສົບການເຮັດວຽກຢ່າງໜ້ອຍ 01 ປີຂຶ້ນໄປ; (ສາມາດຈັດຫ້ອງປະຊຸມ, ຫຍິບຜ້າປູໂຕະ, ແກະສະຫຼັກໝາກໄມ້ ຈະພິຈາລະນາພິເສດ);
- ມີຄວາມຊື່ສັດ, ມີສຸຂະພາບແຂງແຮງດີ, ມີມະນຸດສຳພັນດີ, ມີຄວາມຫ້າວຫັນໃນການປະຕິບັດວຽກງານ;
- ໜ້າທີ່ຮັບຜິດຊອບຮັກສາຄວາມສະອາດຫ້ອງການ, ຫ້ອງນໍ້າ, ເກັບມ້ຽນ, ປັດກວດຂີ້ເຫຍື້ອ, ເຊັດຖູອຸປະກອນພາຍໃນສຳນັກງານ, ຊ່ວຍກະກຽມກອງປະຊຸມ, ຊ່ວຍສົ່ງເອກະສານພາຍນອກ;

**ເອກະສານທີ່ຕ້ອງປະກອບ:**

- ໃບຊີວະປະຫວັດ(ເປັນເຫຼັ້ມ4ໜ້າ);
- ໃບຄຳຮ້ອງຂຽນດ້ວຍຕົນເອງ;
- ໃບຢັ້ງຢືນທີ່ຢູ່;
- ໃບຢັ້ງຢືນຮັບປະກັນ;
- ໃບກວດສຸຂະພາບ;
- ໃບແຈ້ງໂທດ;
- ສຳເນົາສຳມະໂນຄົວ, ບັດປະຈຳຕົວ,ໃບປະກາສະນິຍະບັດ ແລະ ໃບຄະແນນ;
- ສຳເນົາໃບຢັ້ງຢືນການຜ່ານງານ, ໃນກໍລະນີມີປະສົບການໃນການເຮັດວຽກມາກ່ອນ ແມ່ນໃຫ້ຜູ້ກ່ຽວຂຽນລະອຽດໃນການປະຕິບັດວຽກງານໃນໄລຍະຜ່ານມາ.

**ການຍື່ນເອກະສານສະໝັກງານ**

1. ຜູ້ສົນໃຈສາມາດປະກອບເອກະສານເພື່ອນຳສົ່ງ ທີ່ພະແນກຫ້ອງການ-ຈັດຕັ້ງ ຊັ້ນ 04 ທະນາຄານແຫ່ງ ສປປ ລາວ ພາກໃຕ້ ແຂວງຈຳປາສັກ, ພ້ອມທັງອັດສຳເນົາບັດສັກວັກແຊັງປ້ອງກັນພະຍາດໂຄວິດ-19 ເຂັມ3;

2. ເປີດຮັບເອກະສານສະໝັກງານໃນວັນເວລາລັດຖະການ(ຕອນເຊົ້າ 08-11:30 ໂມງ, ຕອນບ່າຍ 13:00-16:00 ໂມງ) ແຕ່ມື້ປະກາດເຖິງວັນທີ 20 ຕຸລາ 2022.

**ໝາຍເຫດ:**

1. ຜູ້ສະໝັກຕ້ອງປະກອບເອກະສານໃຫ້ຄົບຖ້ວນຕາມທີ່ລະບຸຂ້າງເທິງ,ກໍລະນີເອກະສານບໍ່ຄົບຖ້ວນຖືວ່າສະຫຼະສິດ;
2. ຜູ້ສະໝັກຕ້ອງນຳສົ່ງເອກະສານສະໝັກງານດ້ວຍຕົນເອງ ແລະ ເບີໂທລະສັບທີ່ຕິດຕໍ່ພົວພັນໄດ້;
3. ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ ເບີໂທລະສັບ 020 54221456.

**ຫົວໜ້າ ທະນາຄານແຫ່ງ ສປປ ລາວ ພາກໃຕ້**

ທະນາຄານແຫ່ງ ສປປ ລາວ ... ທະນາຄານພາກໃຕ້ທີ່ແຂວງ...

ບອນຕາ ແກ້ວມະນີ